

*ຖ້າຫາກວ່າທ່ານມີຄວາມເສັຽອົງຄະແລະຢູ່ໃນຣະຫວ່າງອາຍຸ **14** ປີແລະ **24** ປີ,ທ່ານສາມາດໄດ້ຮັບຄວາມຊ່ວຍເຫລືອນຳການກໍ່ສ້າງຄວາມຊຳນານນຳວຽກງານ,ການຄົ້ນຄ້ວາຫາຄວາມສົນໃຈໃນວິຊາຊີບແລະການຮຽນຮູ້ທີ່ຈະຊ່ວຍເຫລືອຕົວທ່ານເອງຢູ່ໃນວຽກງານ.*

## ການບໍຣິການຜັນປ່ຽນຕໍ່ມາແມ່ນຫຍັງ?

DSHS' Division of Vocational Rehabilitation ເອົາການບໍຣິການຜັນປ່ຽນຕໍ່ມາໃຫ້ເພື່ອຈະອູ້ມຊູແລະໃຫ້ຄຳຊີ້ນຳແກ່ນັກຮຽນແລະຊາວຫນຸ່ມຜູ້ທີ່ມີຄວາມເສັຽອົງຄະເມື່ອເວລາເຂົາເຈົ້າຕຽມພ້ອມສຳລັບກຸ່ມແຮງງານ.

ການບໍຣິການຜັນປ່ຽນຕໍ່ມາສາມາດຊ່ວຍຊາວຫນຸ່ມແລະນັກຮຽນ:

- ກໍ່ສ້າງຄວາມຊຳນານໃນວຽກງານ.
- ຄົ້ນຄ້ວຫາຄວາມສົນໃຈໃນວິຊາຊີບ.
- ຍົກລະດັບຄວາມຊຳນານໃນການຊ່ວຍເຫລືອຕົນເອງ.

## ການເພີ້ມພະລັງການຜັນປ່ຽນໃນຊີວິດຂອງທ່ານຫລັງຈາກຣາຍສະກຸນ

Washington State Transition Map ແມ່ນແຫລ່ງຊ່ວຍເຫລືອຮ່ວມກັນທີ່ບັນຣະຍາຍການບໍຣິການຜັນປ່ຽນຕໍ່ມາສຳຄັນທີ່ມີໄວ້ໃຫ້ແກ່ບຸກຄົນຜູ້ທີ່ມີຄວາມສັຽອົງຄະແລະຄອບຄົວຂອງເຂົາ ເຈົ້າ. ເບິ່ງແຜນທີ່ໃນ12 ພາສາໄດ້ທີ່ www.wsrcwa.org/transition-map.

**ຢູ່ທີ່ DVR, ພວກເຮົາມອງເຫັນອະນາຄົດທີ່ນັກຮຽນ,ຊາວຫນຸ່ມ,ແລະຜູ້ໃຫຍ່ທມີຄວາມເສັຽອົງຄະສາມາດຝັນໃຫຍ່ແລະບັນລຸເປົ້າຫມາຍວຽກງານຂອງເຂົາເຈົ້າ.**

**Washington State Department of Social and Health Services Division of Vocational Rehabilitation**

PO Box 45340 | Olympia, WA 98504-5340

1-800-637-5627 | Washington Relay: 711

DVRCSR@dshs.wa.gov

dshs.wa.gov/dvr

*ໃຫ້ການບໍຣິການ DVR ມາຕັ້ງແຕ່ 1933*

DSHS 22-2051 LA (3/25) Laotian

# ການບໍຣິການຜັນປ່ຽນຕໍ່ມາສຳລັບນັກຮຽນແລະຊາວຫນຸ່ມ



DSHS WASHINGTON STATE Department of Social and Health Services

## ຂະແນງຂອງການບໍຣິການຜັນປ່ຽນຕໍ່ມາກ່ອນວຽກງານ

**ການຄົ້ນຄ້ວາຫາວຽກງານ**

ຮຽນຮູ້ກ່ຽວກັບບ່ອນວຽກງານແຕກຕ່າງກັນໄປ,ຄວາມສົນໃຈໃນວຽກງານແນວໃດແດ່ທີ່ທ່ານອາດຈະມີຢູ່ແລະຄວາມຊໍານານທີ່ທ່ານອາດຈະຕ້ອງ ການເພື່ອຈະເປັນຜົນສໍາເຣັດ.

**ການຝຶກຝົນຄວາມຕຽມພ້ອມສໍາລັບບ່ອນເຮັດວຽກ**

ຮຽນຮູ້ກ່ຽວກັບແລະໄດ້ຮັບຄວາມຊໍານານເພື່ອຈະຕຽມພ້ອມສໍາລັບວຽກງານ,ລວມທັງຄວາມຊໍານານໃນການດໍາຣົງຊີວິດໂດຍບໍ່ຂຶ້ນນໍາໃຜຊຶ່ງກ່ຽວພັນນໍາວຽກງານ.

**ການຊ່ວຍເຫລືອຕົນເອງ**

ຮຽນຮູ້ກ່ຽວກັບແລະໄດ້ຮັບຄວາມຊໍານານກ່ຽວກັບວ່າຈະຊ່ວຍເຫລືອຕົວທ່ານເອງໄດ້ແນວໃດແລະຮ້ອງຂໍເອົາການອໍານວຍຄວາມສະດວກທີ່ທ່ານອາດຈະຕ້ອງການເພື່ອຈະເປັນຜົນສໍາເຣັດ.

**ການປຶກສາເຣື່ອງການສຶກສາຫລັງຈານຊັ້ນມັດທະຍົມ**

ຮຽນຮູ້ແລະໄດ້ຮັບການຊີ້ນໍາກ່ຽວກັບທາງເລືອກເອົາສໍາລັບການສຶກສາແລະການຝຶກຝົນທີ່ດໍາເນີນຕໍ່ໄປຫລັງຈາກຣາຍສະກຸນໃນເຂດຂອງຄວາມສົນໃຈແລະຄວາມສາມາດຂອງທ່ານ.

**ການຮຽນຮູ້ອີງຕາມວຽກງານ**

ໂອກາດທີ່ຈະເຂົ້າຮ່ວມໃນກິຈກັມເພື່ອຈະຮຽນຮູ້ກ່ຽວກັບບ່ອນເຮັດວຽກງານຢູ່ໃນຊຸມຊົນຂອງທ່ານ.



## School-to-Work

ໂຄງການ School-to-Work ອູ້ມຊູນັກຮຽນຜູ້ທີ່ມີຄວາມເສັຽອົງຄະທາງ ສະຕິປັນຍາແລະການຈະເຣີນເຕີບໂຕ. ຜົນປະໂຍດຂອງ School-to-Work ສາມາດເປັນ:

- ການເອົາໂອກາດໃຫ້ນັກຮຽນເພື່ອຈະໄດ້ວຽກເຮັດກ່ອນທີ່ເຂົາເຈົ້າຈະຈົບໂຮງຮຽນແລະອອກໂຮງຮຽນ.
- ການຊ່ວຍເຫລືອນັກຮຽນໃຫ້ຕິດແທດໃສ່ການບໍຣິການຜູ້ໃຫຍ່ທີ່ສໍາຄັນຊຶ່ງສາມາດອູ້ມຊູເຂົາເຈົ້າ.
- ການຊັກຊວນນັກຮຽນໃຫ້ມີບົດບາດຈິງຈັງໃນການວາງແຜນສໍາລັບອະນາຄົດຂອງເຂົາເຈົ້າ.

ເບິ່ງຣາຍຣະອຽດຂອງໂຄງການຄົບຖ້ວນໄດ້ທີ່ www.dshs.wa.gov/dvr/school-work.

## ຈະເຂົ້າຮ່ວມໄດ້ຢ່າງໃດ

ນັກຮຽນແລະຊາວໜຸ່ມຜູ້ທີ່ມີຄວາມເສັຽອົງຄະສາມາດໄດ້ຮັບການບໍຣິການຜັນປ່ຽນຕໍ່ມາ,ແຕ່ວ່າຊະນິດຂອງການບໍຣິການທີ່ມີໄວ້ໃຫ້ແຕ່ລະກຸ່ມແມ່ນແຕກ ຕ່າງກັນ.ຕິດຕໍ່ຫາຜູ້ປຶກສາການຜັນປ່ຽນຕໍ່ມາຂອງທ້ອງຖິ່ນຫລືຜູ້ປຶກສາການຝຶກຝົນວິຊາຊີບໃຫ້ດີຄືນຢູ່ໃນເຂດຂອງທ່ານເພື່ອຈະເລີ້ມຕົ້ນ.

## ຮຽນຮູ້ເພີ້ມເຕີມແລະຕິດແທດນໍາ DVR

www.dshs.wa.gov/dvr/student-and-youth-vr-transition-services



## ການອໍານວຍຄວາມສະດວກ

ທຸກໆຄົນຜູ້ທີ່ຕ້ອງການຄວາມຊ່ວຍເຫລືອຫລືການບໍຣິການສໍາລັບການຕິດຕໍ່ສື່ສານທີ່ໃຊ້ໄດ້ຜົນດີ,ກະຣຸນາຕິດຕໍ່ຫາ dvr.languageaccess@dshs.wa.gov.

ຖ້າຫາກວ່າທ່ານຕ້ອງການການອໍານວຍຄວາມສະດວກຫລືການດັດແປງໃນນະໂຍບາຍຫລືຣະບຽບການເພື່ອຈະເຂົ້າຮ່ວມໃນໂຄງການ,ການບໍຣິການ,ຫລືກິຈກັມຂອງ DSHS, ກະຣຸນາຕິດຕໍ່ຫາຜູ້ປະສານງານ DVR ADA ສໍາລັບການອໍານວຍຄວາມສະດວກຫລືກາດັດແປງໄດ້ທີ່ DVRADACoordinator@dshs.wa.gov.

## ໃບແຈ້ງການງົບປະມານ

ໄດ້ຖືກໃຊ້ເພື່ອຈະໃຫ້ການບໍຣິການ DVR. ໂຄງການ VR ໄດ້ຮັບປະມານ 78 ເປີເຊັນໃນເງິນທຶນຂອງຣັດຖະບານກາງແລະ 22 ເປີເຊັນໃນເງິນທຶນຂອງຣັດ.ເພື່ອຣາຍຣະອຽດຄົບຖ້ວນໃນຈໍານວນເງິນຂອງເງິນທຶນຂອງຣັດຖະບານກາງສໍາລັບໂຄງການ, ກະຣຸນາແວ່ຢ້ຽມ https://rsa.ed.gov/fiscal/grant-awards.